**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ເລກທີ / ຈນວ

ລົງວັນທີ

ນະຄອນຫຼວງວຽງຈັນ

# ບົດຖະແຫຼງຂ່າວ

## ການຈັດງານປະເພນີບຸນນະມັດສະການພຣະທາດຫຼວງປະຈຳປີ 2020

- ອີງຕາມຂໍ້ຕົກລົງຂອງທ່ານເຈົ້າຄອງນະຄອນຫຼວງວຽງຈັນ ສະບັບເລກທີ 0690/ຈນວ, ລົງວັນທີ 13 ກໍລະກົດ 2018 ວ່າດ້ວຍການຄຸ້ມຄອງສະໜາມຫຼວງ, ພຣະທາດຫຼວງ ແລະ ບໍລິເວນອ້ອມຮອບ;
- ອີງຕາມແຈ້ງການຂອງຫ້ອງວ່າການສູນກາງພັກ ສະບັບເລກທີ 282/ຫສພ, ລົງວັນທີ 15 ຕຸລາ 2020 ເລື່ອງການຈັດງານບຸນນະມັດສະການພຣະທາດຫຼວງ ປະຈຳປີ 2020 ແລະ ແຈ້ງການຂອງຫ້ອງວ່າການສຳນັກນາຍົກລັດຖະມົນຕີ ສະບັບເລກທີ 1132/ຫສນຍ, ລົງວັນທີ 15 ຕຸລາ 2020 ວ່າດ້ວຍທິດຊີ້ນຳກ່ຽວກັບການຈັດງານບຸນນະມັດສະການພຣະທາດຫຼວງ ປະຈຳປີ 2020
- ອີງຕາມຄຳແນະນຳຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ GOVID-19 ສະບັບເລກທີ 315/ ຖວທ, ລົງວັນທີ 07 ຕຸລາ 2020;
- ອີງຕາມທິດຊີ້ນຳຂອງກອງປະຊຸມຄະນະປະຈຳພັກນະຄອນຫຼວງວຽງຈັນ ຄັ້ງວັນທີ 20 ຕຸລາ 2020.

**ຄະນະຮັບຜິດຊອບຈັດງານບຸນນະມັດສະການພຣະທາດຫຼວງ ປະຈຳປີ 2020 ຈຶ່ງຂໍອະນຸຍາດແຈ້ງຂ່າວກ່ຽວກັບແຜນການຈັດງານປະເພນີບຸນນະມັດສະການພຣະທາດຫຼວງ ປະຈຳປີ 2020 ເພື່ອໃຫ້ການຈັດຕັ້ງທຸກພາກສ່ວນ, ບໍລິສັດຫ້າງຮ້ານ, ຜູ້ປະກອບການ, ຕະຫຼອດເຖິງປວງຊົນລາວບັນດາເຜົ່າ ເພື່ອຮັບຊາບດັ່ງນີ້:**

**I: ວ່າດ້ວຍຈຸດປະສົງ ແລະ ລະດັບຄາດໝາຍ.**

1. ເພື່ອອະນຸລັກ ແລະ ເສີມຂະຫຍາຍມູນເຊື້ອປະເພນີອັນດີງາມຂອງງານບຸນນະມັດສະການພຣະທາດຫຼວງຂອງຊາວລາວກໍຄືຊາວນະຄອນຫຼວງວຽງຈັນທີ່ສືບທອດກັນມາແຕ່ບູຮານນະການໃຫ້ຍືນຍົງຕະຫຼອດໄປ.
2. ເປັນການສ້າງແບບແຜນວິຖີວັດທະນະທຳໃໝ່ ຕິດພັນການຊຸກຍູ້ສົ່ງເສີມການທ່ອງທ່ຽວພາຍໃນໃຫ້ມີຄວາມເຂັ້ມແຂງ ເພື່ອເປັນການຟື້ນຟູຜົນກະທົບຈາກໂລກລະບາດ GOVID-19.
3. ຖືເອົາໂອກາດບຸນນະມັດສະການພຣະຫຼວງ ຊຶ່ງປີລະຄັ້ງສ້າງເງື່ອນໄຂໃຫ້ປະຊາຊົນລາວທັງຊາດທີ່ມີຈິດໃຈໃສສັດທາຕໍ່ອົງພຣະທາດຫຼວງທີ່ເປັນມໍລະດົກມິ່ງເມືອງ, ເປັນມິ່ງຂວັນຂອງຊາວລາວ ໄດ້ມາຖວາຍໂຫວ້ບູຊາພຣະທາດຫຼວງ.

4. ເພື່ອຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມສະອາດງາມຕາໃນຂອບເຂດການຈັດງານປະເພນີບຸນນະມັດສະການພຣະທາດຫຼວງ ເປັນຕົ້ນ: ເຂດພຣະທາດຫຼວງ, ສະໜາມຫຼວງ ແລະ ບ້ານອ້ອມຂ້າງທີ່ຕິດພັນກັບພື້ນທີ່ຈັດງານບຸນ.

II. **ແຜນລາຍລະອຽດຂອງການຈັດງານ:** ບຸນນະມັດສະການພຣະທາດຫຼວງປະຈຳປີ 2020 ຈະມີຄວາມແຕກຕ່າງຈາກປີທີ່ຜ່ານມາ ເນື່ອງຈາກສະພາບການລະບາດຂອງພະຍາດໂຄວິດ 19 ຊຶ່ງມີທິດຊີ້ນຳຈາກຂັ້ນເທິງໃຫ້ເນັ້ນໃສ່ທາງດ້ານຮີດຄອງປະເພນີ, ບໍ່ໃຫ້ມີການຕະຫຼາດນັດວາງສະແດງ ແລະ ຈຳໜ່າຍສິນຄ້າ, ດັ່ງນັ້ນຄະນະຮັບຜິດຊອບຈຶ່ງມີແຜນລະອຽດດັ່ງນີ້:

1. ວັນເວລາ: ບຸນນະມັດສະການພຣະທາດຫຼວງປະຈຳປີ 2020 ຈະໄດ້ຈັດເປັນເວລາ 3 ວັນ ຄືນັບແຕ່ວັນທີ 29 -31 ຕຸລາ 2020 ກົງກັບມື້ຂຶ້ນ 13 -15 ຄ່ຳ ເດືອນ 12 ເພັງ ພສ 2563.
2. ກິດຈະກຳປະເພນີຕົ້ນຕໍ:

- ວັນທີ 29 ຕຸລາ 2020 ກົງກັບມື້ຂຶ້ນ 13 ຄ່ຳເດືອນ 12 ລາວ ພສ 2563:
  - ➢ ຕອນເຊົ້າ ເລີ່ມແຕ່ 08 ໂມງ 00 ເປັນຕົ້ນໄປ ຈະມີການຮ້າງຫາກະກຽມຕົບແຕ່ງ, ປະດັບປະດາສະຖານທີ່ທາງດ້ານນອກ ແລະ ດ້ານໃນກົມມະລຽນພຣະທາດຫຼວງ
  - ➢ ຕອນແລງເວລາ 16 ໂມງ 00 ຈະມີພິທີສູດປາຣິຕະມຸງຄຸນ ເປີດປະຕູພຣະທາດ.
  - ➢ ຕອນແລງເວລາ 20 ໂມງ 00 ພິທີວຽນທຽນ, ແຫ່ຜາສາດເຜິ້ງ, ມ່ວນຊື່ນຊາວບ້ານ ແລະ ຄົບງັນຕາມປະເພນີ
- ວັນທີ 30 ຕຸລາ 2020 ກົງກັບມື້ຂຶ້ນ 14 ຄ່ຳເດືອນ12 ລາວ ພສ 2563:
  - ➢ ເວລາ 13 ໂມງ 00 ເຕົ້າໂຮມຜາສາດເຜິ້ງຈາກ 4 ຕົວເມືອງ ຢູ່ໜ້າວັດໜອງບອນ.
  - ➢ ເວລາ 13 ໂມງ 30 – 18 ໂມງ 00 ເຄື່ອນຂະບວນ ພິທີແຫ່ຜາສາດເຜິ້ງ ສູ່ກົມມະລຽນພະທາດຫຼວງ, ໃນນັ້ນຈະມີຂະບວນແຫ່ທົ່ງບັ້ງ, ດົນຕີພື້ນເມືອງ, ເມື່ອຮອດພະທາດຫຼວງແລ້ວແຫ່ອ້ອມພະທາດ 3 ຮອບ, ຖວາຍຜ້າສາດເຜິ້ງ, ຟັງທຳມະເທດສະໜາ 1 ກັນ ແລະ ຄົບງັນຕາມຮີດຄອງປະເພນີ.
- ວັນທີ 31 ຕຸລາ 2020 ກົງກັບມື້ຂຶ້ນ 15 ຄ່ຳເດືອນ 12ລາວ ພສ 2563
  - ➢ ເວລາ 07 ໂມງ00-8ໂມງ30 ພິທີໄຫວ້ພຣະຮັບສິນ, ຟັງທຳມະເທດສະໜາ, ຖວາຍສັງຄະທານ ຄາລະວະໃຫ້ພອນຢາດນ້ຳ, ພິທີຕັກບາດ ແລະ ບິນພຣະບາດຂອງພຣະສົງ ສາມະເນນ.
  - ➢ ເວລາ 12 ໂມງ 00 ເຕົ້າໂຮມນັກກິລາຕີຄີ ຢູ່ວັດທາດຫຼວງໃຕ້
  - ➢ ເວລາ 12 ໂມງ 30 ພິທີອັນເຊີນລູກຄີຢູ່ຫໍເຈົ້າໄຊເຊດຖາທິລາດ ເຂົ້າສູ່ພະທາດຫຼວງ ຫຼັງຈາກເສັດພິທີ ແລ້ວແຫ່ຂະບວນລູກຄີລົງສູ່ສະໜາມຫຼວງ ແລະ ເປີດການແຂ່ງຂັນຕີຄີ
  - ➢ ເວລາ 19 ໂມງ 00 ພິທີວຽນທຽນຢູ່ກົມມະລຽນພຣະທາດຫຼວງ ແລະ ຈູດບັ້ງໄຟບູຊາອົງພຣະທາດ ( ມີການຈັດສັນຈຳນວນຜູ້ເຂົ້າຮ່ວມໃຫ້ມີຄວາມເໝາະສົມ).

ນອກຈາກປະເພນີຢູ່ພະທາດຫຼວງແລ້ວຍັງມີປະເພນີທີ່ກ່ຽວພັນກັບງານບຸນພະທາດຫຼວງ ຢູ່ສະຖານທີ່ວັດອື່ນໆດັ່ງນີ້ :

- ວັນທີ 28 ເດືອນ ຕຸລາ 2020 ກົງກັບມື້ ຂຶ້ນ 12 ຄ່ຳ ເດືອນ 12 ປີຊວດ 2563 ( ສະຖານທີ່ ວັດສີເມືອງ )
  - ➢ ເວລາ 8 ໂມງ 00 ພິທີຖວາຍເຄື່ອງສະເຫວີຍແດ່ພະເຫສັກຫຼັກເມືອງ.
  - ➢ ເວລາ 16 ໂມງ 00 ສູດປະຣິຕະມຸງຄຸນ

- ວັນທີ 31 ເດືອນ ຕຸລາ 2020 ກົງກັບມື້ຂຶ້ນ 15 ຄ່ຳ ເດືອນ 12 ປີຊວດ ພສ 2563 ( ສະຖານທີ່ ວັດໄຕໃຫຍ່ )
  - ➢ ເວລາ 20 ໂມງ 30 ພິທີວຽນທຽນ ແຫ່ຜ້າສາດເຜີ້ງ, ຈູດບັ້ງໄຟ ລົບງັນຕາມປະເພນີ.
- ວັນທີ 1 ເດືອນ ພະຈິກ ປີ 2020 ກົງກັບມື້ ແຮມ 1 ຄ່ຳ ເດືອນ 12 ປີຊວດ ພສ 2563 ( ສະຖານທີ່ ວັດອົງຕື້ ແລະ ວັດອິນແປງ )
  - ➢ ເວລາ 18 ໂມງ 00 ເຕົ້າໂຮມພຣະສົງສຳມະເນນ, ເຖົ້າແກ່ແມ່ວໂຮມ, ມວນຊົນທົ່ວໄປ, ຜ້າສາດເຜີ້ງ, ຕົ້ນກາລະພຶກ ແລະ ດອກໄມ້ທູບທຽນ.
  - ➢ ເວລາ 20 ໂມງ 00 ແຫ່ຜ້າສາດເຜີ້ງຈາກວັດອົງຕື້ ໄປຫາວັດອິນແປງ, ຈູດບັ້ງໄຟບູຊາຕາມຮີດຄອງປະເພນີ ແລະ ແຫ່ກັບຄືນມາວັດອົງຕື້ ຖວາຍດອກໄມ້ທູບທຽນ ຈູດບັ້ງໄຟບູຊາ ແລະ ລົບງັນຕາມຮີດຄອງປະເພນີ

ຖືວ່າສຳເລັດ ພິທີທາງຮີດຄອງ ແລະ ສາສາໜາ ໃນງານບຸນນະມັດສະການພະທາດຫຼວງວຽງຈັນ

3. ສ່ວນກິດຈະກຳການລົບງັນອື່ນໆ: ເນື່ອຈາກປີນີ້ຈະບໍ່ໄດ້ມີການຈັດງານຕະຫຼາດນັດວາງສະແດງ ແລະ ຈຳໜ່າຍສິນຄ້າ, ດັ່ງນັ້ນຈະອະນຸຍາດໃຫ້ມີແຕ່ການບໍລິການຈຳນວນໜຶ່ງທີ່ມີຄວາມຈຳເປັນ ແລະ ຕິດພັນກັບກິດຈະກຳທາງດ້ານປະເພນີ ເປັນຕົ້ນ:
   - ➢ ການບໍລິການເຄື່ອງທີ່ລະນຶກ, ເຄື່ອງບູຊາ, ດອກໄມ້ທູບທຽນ
   - ➢ ບໍລິການຫ້ອງນ້ຳສະອາດ
   - ➢ ບໍລິການຝາກລົດຈັກ-ລົດໃຫຍ່
   - ➢ ອາຫານການກິນຕາມຈຸດທີ່ມີການບໍລິການເປັນປົກກະຕິຢູ່ແລ້ວ

4. ວຽກງານປ້ອງກັນຄວາມສະຫງົບ: ເຖິງແມ່ນຈະບໍ່ໄດ້ຈັດງານໃຫຍ່ຄືຜ່ານ ແຕ່ເພື່ອຄວາມຮັບປະກັນແມ່ນຈະໄດ້ເອົາໃຈໃສ່ຈັດວາງກຳລັງເພື່ອເຮັດໜ້າທີ່ກວດກາ, ປ້ອງກັນເວນຍາມ ຕະຫຼອດໄລຍະການຈັດງານບຸນໃຫ້ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ, ພິເສດຈະໄດ້ປະສານສົມທົບກັບຄະນະສະເພາະກິດປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດຂອງພະຍາດ ໂຄວິດ 19 ເພື່ອຈະມີມາດຕາການປ້ອງກັນຢ່າງເຂັ້ມງວດ.

ດັ່ງນັ້ນ, ຂ້າພະເຈົ້າອະນຸຍາດຕາງໜ້າຄະນະຮັບຜິດຊອບຈັດງານປະເພນີບຸນນະມັດສະການພຣະທາດຫຼວງປະຈຳປີ 2020 ຂໍແຈ້ງມາຍັງການຈັດຕັ້ງທຸກພາກສ່ວນ, ບໍລິສັດຫ້າງຮ້ານ, ຜູ້ປະກອບການ, ຕະຫຼອດເຖິງປະຊາຊົນລາວບັນດາເຜົ່າຮັບຊາບຢ່າງທົ່ວເຖິງກັນ ແລະ ພ້ອມກັນມີສະຕິໃນການມາຮ່ວມສະເຫຼີມສະຫຼອງງານບຸນນະມັດສະການພຣະທາດຫຼວງປະຈຳປີ 2020 ແລະ ໃຫ້ສື່ມວນຊົນທຸກພາກສ່ວນຊ່ວຍໂຄສະນາປະຊາສຳພັນໃຫ້ ກ້ວາງຂວາງ

ຂໍຂອບໃຈ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
**********

ແນວລາວສ້າງຊາດ
ເບີໂທ 021 260 238

ເລກທີ........./ ນຊ.ນວ
ນະຄອນຫຼວງວຽງຈັນ, ລົງວັນທີ..................

**ລາຍການບຸນນະມັດສະການພະທາດຫຼວງວຽງຈັນ**
**( ປະຈໍາປີ ພສ 2563 ກົງກັບວັນທີ 29-31/10/2020 )**

1. **ວັດສີເມືອງ:**

❖ **ວັນພຸດຂຶ້ນ 12 ຄ່ຳ ເດືອນ 12 ປີຊວດ, ກົງກັບວັນທີ 28 ເດືອນ ຕຸລາ ປີ ພສ 2563 (ຄສ 2020 )**

- ເວລາ 8:00 ໂມງ ພິທີຖວາຍເຄື່ອງສະເຫວີຍແດ່ມະເຫສັກຫຼັກເມືອງ.
- ເວລາ 16:00 ໂມງ ສູດປະຣິຕະມຸງຄຸນ.

2. **ພະທາດຫຼວງ:**

❖ **ວັນພະຫັດ ຂຶ້ນ 13 ຄ່ຳ ເດືອນ 12 ປີຊວດ, ກົງກັບວັນທີ 29 ເດືອນ ຕຸລາ ປີ ພສ 2563 (ຄສ 2020 )**

- ຕອນເຊົ້າ: ປະດັບປະດາຕົບແຕ່ງສະຖານທີ່ພາຍນອກ ແລະ ພາຍໃນກົມມະລຽນພະທາດຫຼວງ
- ຕອນແລງ: ເວລາ 16:00 ໂມງ ສູດປະຣິຕະມຸງຄຸນ ຢູ່ທີ່ພະທາດຫຼວງ ( ການນໍາຂັ້ນສູນກາງ ແລະ ການນໍາຂັ້ນສູງ ນະຄອນຫຼວງວຽງຈັນ ເຂົ້າຮ່ວມ ).
- ເວລາ 20:00ໂມງ ພິທີວຽນທຽນ, ແຫ່ຜ້າສາດເພິ້ງ, ມວນຊົນຊາວບ້ານ ແລະ ຄົບງັນຕາມປະເພນີ.

❖ **ວັນສຸກຂຶ້ນ 14 ຄ່ຳເດືອນ 12 ປີຊວດ, ກົງກັບວັນທີ 30 ເດືອນ ຕຸລາ ປີ ພສ 2563 ( ຄສ 2020 )**

- ເວລາ 13:00ໂມງ ເຕົ້າໂຮມຜ້າສາດເພິ້ງ ຈາກ 4 ຕົວເມືອງໃນ ຢູ່ໜ້າວັດໜອງບອນ
- ເວລາ 13:30ໂມງ ເຄື່ອນຂະບວນແຫ່ຜ້າສາດເພິ້ງເຂົ້າສູ່ກົມມະລຽນພະທາດຫຼວງ, ໃນນັ້ນມີຂະບວນແຜ່ທົ່ງບັ້ງ, ດົນຕີພື້ນເມືອງ, ເມື່ອຮອດພະທາດຫຼວງແລ້ວແມ່ນແຫ່ອ້ອມທາດຫຼວງ 3 ຮອບ, ຖວາຍຜ້າສາດເພິ້ງ, ຟັງທໍາມະເທດສະໜາ 1 ກັນ ແລະ ຄົບງັນຕາມຮີດຄອງປະເພນີ.

❖ **ວັນເສົາຂຶ້ນ 15 ຄ່ຳຄ່ຳເດືອນ 12 ປີຊວດ, ກົງກັບວັນທີ 31 ເດືອນ ຕຸລາ ປີ ພສ 2563 ( ຄສ 2020 )**

- ເວລາ 7:00 ໂມງ ພິທີໄຫວ້ພຣະຮັບສິນ, ຟັງທໍາມະເທດສະໜາ, ຖວາຍສັງຄະທານ ຄາລະວະໃຫ້ພອນຢາດນ້ຳ, ພິທີໃສ່ບາດ ແລະ ບິນທະບາດຂອງພຣະສົງສາມະເນນ

- ເວລາ12:00ໂມງ ເຕົ້າໂຮມນັກກິລາຕີຄີ ຢູ່ວັດທາດຫຼວງໃຕ້.
- ເວລາ12:30 ໂມງ ຄະນະຕີຄີໄປອັນເຊີນເອົາລູກຄີ ທີ່ເຈົ້າໄຊເສດຖາທິລາດ ເຂົ້າສູ່ທາດຫຼວງຫຼັງຈາກສໍາເລັດ ພິທີແລ້ວ ຂະບວນແຫ່ລູກຄີລົງສູ່ສະໜາມ.
- ເວລາ 19:00ໂມງ ເຮັດພິທີວຽນທຽນ, ຈູດທູບບູຊາອ້ອມພະທາດຫຼວງ ແລະ ຈູດບັ້ງໄຟ ຮັກກາລະບູຊາພະທາດຫຼວງ ແລະ ຄົບງັນຕາມຮີດຄອງປະເພນີທີ່ເຄີຍປະຕິບັດກັນມາ.

**3. ວັດໄຕໃຫຍ່:**

- **ວັນເສົາຂຶ້ນ 15 ຄ່ຳເດືອນ 12 ປີຊວດ, ກົງກັບວັນທີ 31 ເດືອນ ຕຸລາ ປີ ພສ 2563 ( ຄສ 2020 )**
  - ເວລາ 20:30 ໂມງມີພິທີວຽນທຽນ, ແຫ່ຜ້າສາດເຜີ້ງ, ຈູດບັ້ງໄຟ ແລະ ຄົບງັນຕາມປະເພນີ.

**4.ບຸນວັດອິງຕື້ ແລະ ວັດອິນແປງ:**

- **ວັນອາທິດ ແຮມ 1 ຄ່ຳ ເດືອນ 12 ປີຊວດ, ກົງກັບວັນທີ 1 ເດືອນ ພະຈິກ ປີ ພສ 2563 ( ຄສ 2020 )**
  - ເວລາ 18:00ໂມງ ເຕົ້າໂຮມພຣະສົງ-ສາມະເນນ, ເຖົ້າແກ່ແມ່ວໂຮມ, ມວນຊົນທົ່ວໄປ, ຜ້າສາດເຜີ້ງ, ຕົ້ນກາລະພຶກ ແລະ ດອກໄມ້ທູບທຽນ.
  - ເວລາ 20:00 ໂມງ ແຫ່ຜ້າສາດເຜີ້ງຈາກວັດອິງຕື້ ໄປຫາວັດອິນແປງ, ຈູດບັ້ງໄຟບູຊາຕາມຮີດຄອງປະເພນີ ແລະ ແຫ່ກັບຄືນມາວັດອິງຕື້ ຖວາຍດອກໄມ້ທູບທຽນ ຈູດບັ້ງໄຟບູຊາ ແລະ ຄົບງັນຕາມຮີດຄອງປະເພນີ.
  - ສໍາເລັດພິທີທາງຮີດຄອງ ແລະ ສາສະໜາ.

**ອະນຸກໍາມະການ ສາສະໜາ - ຮີດຄອງປະເພນີ**

**ລາວສ້າງຊາດ ນະຄອນຫຼວງວຽງຈັນ**

**ປະທານ**